# ລົບລ້າງ ຄວາມບໍ່ຍຸດຕິທໍາ ໃຫ້ໝົດໄປ ຈາກຄວາມທຸກຍາກ

## ຍຸດທະສາດຂອງ

ອ໊ອກສະຟາມປະຈໍາລາວ

2015-2019

OXFAM

Strategy booklet Lao 151127 extended j.indd 1 27/11/15 14:50



# ການເຂົ້າເຖິງໂອກາດ ແລະ ຊັບພະຍາກອນຕ່າງໆ

Strategy booklet Lao 151127 extended j.indd 2 27/11/15 14:50

## ວິໄສທັດ

**ວິໄສທັດຂອງອົງການອັອກສະຟາມກໍ່ຄື ປະຊາຊົນໃນ ສປປ ລາວ ທຸກຖ້ວນໜ້າ ໂດຍສະເພາະແມ່ຍິງ, ມີສິດໃນການໄດ້ຮັບໂອກາດ ແລະ ນຳໃຊ້ຊັບພະຍາກອນທີ່ມີ ເພື່ອແກ້ໄຂຄວາມທຸກຍາກ ແລະ ຄວາມບໍ່ຍຸດຕິທຳໃນທຸກຮູບແບບ.**

## ຫົນທາງສູ່ອານະຄົດ

ໂດຍ**ອີງໃສ່ວິໄສທັດດັ່ງກ່າວ ອົງການອັອກສະຟາມປະຈຳ ສປປ ລາວ ຈະ:**

- ອີງໃສ່ວາລະທີ່ສຳຄັນດັ່ງກ່າວ, ອັອກສະຟາມຈະປະເຊີນໜ້າ ແລະ ຮັບມືກັບບັນດາສາເຫດຕົ້ນຕໍທີ່ພາໃຫ້ເກີດມີຄວາມທຸກຍາກ, ຄວາມບໍໝັ້ນທ່ຽງ, ຄວາມບໍ່ສະເໝີພາບ ແລະ ຄວາມບໍ່ຍຸດຕິທຳ ໃນ ສປປ ລາວ.
- ຍົກໃຫ້ຄວາມສະເໝີພາບລະຫວ່າງຍິງ-ຊາຍ ເປັນສູນກາງຂອງແຜນງານຂອງພວກເຮົາ ເພື່ອຮັບປະກັນວ່າແມ່ຍິງພ້ອມທັງກຸ່ມຄົນທີ່ເປັນກຸ່ມນ້ອຍ ແລະ ຖືກສັງຄົມແບ່ງແຍກ ມີອຳນາດໃນການຕັດສິນໃຈກັບຊີວິດຂອງເຂົາເຈົ້າເອງ ແລະ ສາມາດປະກອບສ່ວນ ຢ່າງຕັ້ງໜ້າເຂົ້າໃນຂະບວນການຕັດສິນບັນຫາ ແລະ ການປ່ຽນແປງຕ່າງໆ.
- ຊຸກຍູ້ ແລະ ສົ່ງເສີມການສ້າງຂີດຄວາມສາມາດ ແລະ ຄວາມເຂັ້ມແຂງໃຫ້ແກ່ບັນດາອົງການ ທີ່ເປັນກະບອກສຽງລຸ້ນໃໝ່ ແລະ ບັນດາອົງການຈັດຕັ້ງທາງສັງຄົມທີ່ເປັນຕົວແທນ ແລະ ມີຄວາມຫ້າວຫັນໃນການສົ່ງເສີມການປະຕິບັດງານຂອງທັງກຸ່ມຄົນ ແລະ ສ່ວນລວມ ທີ່ກຳລັງດຳລົງຊີວິດຢູ່ພາຍໃຕ້ຄວາມທຸກຍາກ, ທີ່ອາດຖືກຈຳແນກ ແລະ ຖືກແບ່ງແຍກຈາກສັງຄົມ ແລະ ກຳລັງປະເຊີນກັບຄວາມບໍ່ຍຸດຕິທຳໃນຫລາຍຮູບແບບ.
- ສະໜັບສະໜູນບັນດາໜ່ວຍງານທີ່ມີຄວາມກ້າວໜ້າ ແລະ ຜູ້ທີ່ສາມາດປ່ຽນແປງ ທີ່ເປັນຜູ້ທີ່ຕ້ອງການໃຫ້ມີການປ່ຽນແປງທາງດ້ານນະໂຍບາຍ, ວິທີປະຕິບັດ, ນິໄສ ແລະ ຄວາມເຊື່ອ, ພ້ອມທັງສາມາດຊຸກຍູ້ໃຫ້ຜູ້ປະຕິບັດໜ້າທີ່ມີຄວາມຮັບຜິດຊອບ.
- ໂດຍນຳໃຊ້ສະຖານະພາບຂອງອົງກອນໃນນາມອົງການຈັດຕັ້ງສາກົນ, ອັອກສະຟາມ ຈະຊຸກຍູ້ສົ່ງເສີມການເຊື່ອມຕໍ່ລະຫວ່າງການຈັດຕັ້ງປະຕິບັດໃນຂັ້ນທ້ອງຖິ່ນ ແລະ ລະດັບສາກົນ ລວມທັງການປະຕິບັດຮ່ວມມືຕ່າງໆ ທີ່ກ່ຽວຂ້ອງຂອງສາກົນ.
- ເສີມຂະຫຍາຍແຜນງານຂອງອົງກອນ ຈາກບົດຮຽນທີ່ຖອດຖອນໄດ້ທີ່ຜ່ານມາ ແລະ ສຸມໃສ່ຄົ້ນຄ້ວາ ວິທີແກ້ໄຂບັນຫາ ແບບສ້າງສັນ ເພື່ອໃຫ້ສາມາດແກ້ໄຂທຸກຮູບແບບຂອງຄວາມທຸກຍາກ ແລະ ຄວາມບໍ່ຍຸດຕິທຳ, ແລະ ໃຫ້ປະຊາຊົນສາມາດປະກອບສ່ວນຕາມສິດທິຂອງເຂົາເຈົ້າໄດ້.
- ເສີມສ້າງລະດັບຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງຄູ່ຮ່ວມງານ ແລະ ຜູ້ໄດ້ຮັບປະໂຫຍດ ໃນທຸກວຽກງານ ແລະ ກິດຈະກຳຂອງພວກເຮົາ.

Strategy booklet Lao 151127 extended j.indd 3 27/11/15 14:50



# ແກ້ໄຂຕົ້ນເຫດ ຂອງຄວາມທຸກຍາກ

## ສະພາບຄວາມທຸກຍາກ ແລະ ຄວາມບໍ່ຍຸດຕິທຳ ໃນ ສປປ ລາວ

**1.**
ຄວາມທຸກຍາກທີ່ຍັງຄົງຄ້າງທ່າມກາງການເຕີບໂຕທາງເສດຖະກິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ເປັນປະເທດທີ່ມີລາຍຮັບຕໍ່າ, ໂດຍມີ ມູນຄ່າລວມຍອດຜະລິດຕະພັນພາຍໃນ ຕໍ່ຫົວຄົນທີ່ 1,369 ໂດລາສະຫະລັດ ໃນປີ 2012. ສປປ ລາວ ຍັງເປັນປະເທດທີ່ທຸກຍາກກວ່າໝູ່ ຖ້າທຽບໃສ່ບັນດາປະເທດໃນສະມາຄົມປະຊະຊາດແຫ່ງອາຊີຕາເວັນອອກສຽງໃຕ້ (ອາຊຽນ). ບັນຫາຄວາມທຸກຍາກຍັງປະກົດເຫັນໄດ້ຢູ່ຫຼາຍບ່ອນພາຍໃນປະເທດ ເຖິງວ່າ ສປປລາວ ຈະມີອັດຕາການເຕີບໂຕທາງເສດຖະກິດຂ້ອນຂ້າງສູງ ແລະ ສະເລ່ຍເຖິງ 7% ໃນແຕ່ລະປີ ໃນໄລຍະສິບປີທີ່ຜ່ານມາ ເຊິ່ງເຫັນໄດ້ວ່າ ມີການເພີ່ມຂຶ້ນຂອງໂຕເລກລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນເປັນເທົ່າຕົວໃນໄລຍະດຽວກັນ. ເຖິງຢ່າງໃດກໍ່ຕາມ, ປະຊາຊົນເກືອບໜຶ່ງສ່ວນສາມຂອງຈຳນວນປະຊາກອນທົ່ວປະເທດປະມານ 6.8 ລ້ານຄົນ ຍັງດຳລົງຊີວິດຢູ່ກ້ອງເສັ້ນຄວາມທຸກຍາກ. ຕັ້ງແຕ່ປີ 2000 ເປົ້າໝາຍຂອງລັດຖະບານ ແມ່ນການຫລຸດຜ່ອນອອກຈາກຄວາມເປັນປະເທດດ້ອຍພັດທະນາພາຍໃນປີ 2020 ໂດຍຮັບປະກັນໃຫ້ການພັດທະນາມີຄວາມສະເໝີພາບ ແລະ ຍືນຍົງ.

ການເຕີບໂຕດ້ານເສດຖະກິດສ່ວນໃຫຍ່ ແມ່ນມາຈາກການຂຸດຄົ້ນ ແລະ ສົ່ງອອກຊັບພະຍາກອນທຳມະຊາດ ຜ່ານການລົງທຶນໂດຍກົງຂອງຕ່າງປະເທດ ເຊັ່ນ: ປະເທດຈີນ, ໄທ ແລະ ຫວຽດນາມ ເຊັ່ນ: ໃນຂະແໜງໄຟຟ້ານໍ້າຕົກ, ຂຸດຄົ້ນບໍ່ແຮ່ ແລະ ການປູກຝັງຂະໜາດໃຫຍ່. ການເຕີບໂຕດັ່ງກ່າວນີ້ ອາດບໍ່ໄດ້ສ້າງຜົນປະໂຫຍດໂດຍກົງຫລາຍຕໍ່ກັບປະຊາຊົນລາວຜູ້ທີ່ທຸກຍາກ ແລະ ທີ່ສ່ວນຫລາຍ ເຮັດວຽກກ່ຽວກັບກະສິກຳ (72% ຂອງແຮງງານລາວທັງໝົດ ແມ່ນຊາວໄຮ່ນາ, ຄົ້ນຫາເຄື່ອງປ່າຂອງດົງ ແລະ ຊາວປະມົງ) ແລະ ລວມທັງ ຜູ້ທີ່ເຮັດວຽກຢູ່ໃນ ຫົວໜ່ວຍທຸລະກິດນ້ອຍຢູ່ໃນຕົວເມືອງທີ່ບໍ່ໄດ້ລົງທະບຽນເປັນທາງການ. ນອກຈາກນີ້, ການເຕີບໂຕຍັງເຮັດໃຫ້ມີການເຄື່ອນຍ້າຍແຮງງານເຂົ້າມາໃນເມືອງ ແລະ ຍ້າຍໄປປະເທດໄທ ໂດຍສະເພາະແມ່ນປະຊາຊົນທີ່ຢູ່ຕາມຊົນນະບົດເຂດຊາຍແດນ. ສະນັ້ນ, ຫາກຂາດການບັງຄັບໃຊ້ມາດຕະຖານແຮງງານ, ກໍ່ຈະເຮັດໃຫ້ເກີດຊ່ອງທາງໃນການສະແຫວງຫາແຕ່ຜົນປະໂຫຍດ, ອາຊີບທີ່ບໍ່ໝັ້ນຄົງ, ບໍ່ໄດ້ຮັບການປົກປ້ອງ ແລະ ສ່ວນໃຫຍ່ເປັນອາຊີບທີ່ມີຄ່າຈ້າງບໍ່ຍຸດຕິທຳ. ນອກຈາກນີ້, ແມ່ຍິງຫລາຍຄົນ ຍັງມີອາຊີບທີ່ລາຍໄດ້ຕ່ຳຢູ່

## 2.
## ການເຕີບໂຕ ແລະ ການພັດທະນາທີ່ບໍ່ຍືນຍົງ

ໃນຊຸມປີ 1990, ສປປ ລາວ ໄດ້ຫັນປ່ຽນ ແລະ ປະຕິຮູບຈາກລະບອບເສດຖະກິດແບບລວມສູນມາເປັນປະເທດທີ່ທັນສະໄໝ ແລະ ອຸດສາຫະກຳ. ເສັ້ນທາງແຫ່ງການພັດທະນານີ້ແມ່ນມີລັກສະນະອ່ຽງໄປທາງຮູບແບບເສລີນິຍົມໃໝ່ - ທີ່ເນັ້ນໜັກໃສ່ການເຕີບໂຕທາງເສດຖະກິດ ເຊິ່ງສ່ວນໃຫຍ່ຖືກຂັບເຄື່ອນດ້ວຍກ້ອນທຶນອັນມະຫາສານ, ສົ່ງເສີມບັນດາອຸດສາຫະກຳການສົ່ງອອກ ແລະ ການລົງທຶນຂອງຕ່າງປະເທດ, ແຕ່ສ່ວນຫລາຍອາດບໍ່ໄດ້ມີການຄຸ້ມຄອງເທົ່າທີ່ຄວນ. ໂດຍທົ່ວໄປ, ຈະມີແຕ່ກຸ່ມຄົນຊັ້ນສູງ ແລະ ນັກລົງທຶນຕ່າງປະເທດທີ່ຮັ່ງມີຂຶ້ນ ໂດຍທີ່ຜູ້ທີ່ໄດ້ຮັບຜົນກະທົບຈະແມ່ນບັນດາທຸລະກິດຂະໜາດນ້ອຍ, ປະຊາຊົນສ່ວນຫລາຍ ແລະ ທາງດ້ານສິ່ງແວດລ້ອມທຳມະຊາດ. ນອກຈາກນີ້, ຊຸມຊົນ ແລະ ສັງຄົມ ສ່ວນໃຫຍ່ແລ້ວ ແມ່ນບໍ່ຮັບຮູ້ຂ່າວສານ ຫລື ຖືກປຶກສາຫາລື ກ່ອນຈະເລີ່ມການລົງທຶນ ແລະ ການອອກສິດສຽງຂອງເຂົາເຈົ້າໃນການຮ່ວມຕັດສິນບັນຫາ ອາດຖືກນາບຂູ່ ແລະ ບໍ່ສາມາດເຮັດໃຫ້ນັກລົງທຶນປ່ຽນແປງຫຍັງໄດ້. ດ້ວຍເຫດນີ້, ການເລັ່ງ ໃສ່ການເຕີບໂຕໄລຍະສັ້ນ ນອກຈາກບໍ່ສາມາດຊຸກຍູ້ແລ້ວຍັງຂັດກັບແນວທາງການສົ່ງເສີມການພັດທະນາແບບຍືນຍົງ.

## 3.
## ການຈັດຕັ້ງທາງສັງຄົມທີ່ກໍ່ຕັ້ງໃໝ່ ແລະ ສຽງທີ່ຈະພາໃຫ້ເກີດການປ່ຽນແປງ

ສະມາຄົມທີ່ບໍ່ຫວັງຜົນກຳໄລຫາ (ສະມາຄົມ) ໄດ້ຮັບອະນຸຍາດສ້າງຕັ້ງຢ່າງເປັນທາງການໃນ ສປປ ລາວ ຕັ້ງແຕ່ປີ 2009 ເປັນຕົ້ນມາ ແລະ ພາຍໃຕ້ດຳລັດວ່າດ້ວຍສະມາຄົມ. ເຖິງຢ່າງໃດກໍ່ຕາມ, ຂັ້ນຕອນໃນການລົງທະບຽນຂຶ້ນເປັນສະມາຄົມແມ່ນຖືວ່າຍັງມີຄວາມຊັກຊ້າຫລາຍ ແລະ ການຂຶ້ນທະບຽນເປັນສະມາຄົມເກີດຂຶ້ນຫລາຍຢູ່ໃນຂັ້ນແຂວງ ເຊິ່ງເຮັດໃຫ້ຂັ້ນສູນກາງບໍ່ສາມາດເກັບກຳໄດ້. ຈຳນວນອົງການຈັດຕັ້ງ ແລະ ໜ່ວຍງານທີ່ສາມາດ ເອີ້ນໄດ້ວ່າເປັນການຈັດຕັ້ງທາງສັງຄົມທີ່ມີຈຳນວນໜ້ອຍຢູ່ແລ້ວນັ້ນ ຊ້ຳພັດມີຄວາມອາດສາມາດທີ່ຈຳກັດທີ່ຈະສາມາດເຂົ້າຮ່ວມໃນການວິເຄາະວິໄຈວຽກງານການເມືອງ. ເຊິ່ງຍິ່ງເຮັດໃຫ້ການເປັນກະບອກສຽງທີ່ຈະພາໃຫ້ເກີດການປ່ຽນແປງ ແຮງໜ້ອຍຕື່ມອີກ. ນອກຈາກນີ້, ບົດບາດຂອງອົງການຈັດຕັ້ງທາງສັງຄົມ ຍັງຖືກຈຳກັດ ໃຫ້ມີການໃຫ້ບໍລິການ ແລະ ພັດທະນາຊຸມຊົນ. ການມີສ່ວນຮ່ວມໃນການສົ່ງຜົນກະທົບຕໍ່ນະໂຍບາຍ ແລະ ອຳນວຍຄວາມສະດວກໃຫ້ແກ່ການຍົກລະດັບສຽງກ່ຽວກັບການຕັດສິນບັນຫາຂອງຊຸມຊົນທີ່ທຸກຍາກ ແມ່ນຍັງພວມຢູ່ໃນໄລຍະທຳອິດຂອງການພັດທະນາ. ການເຂົ້າເຖິງຂໍ້ມູນແມ່ນຍັງຈຳກັດຢູ່

## 4. ຄວາມເທົ່າທຽມກັນລະຫວ່າງຍິງຊາຍ ແລະ ສິດທິຂອງແມ່ຍິງຍັງເປັນບັນຫາສາຫັດ

ແມ່ຍິງ ແລະ ເດັກຍິງສ່ວນໃຫ່ຍຍັງຄົງເປັນຜູ້ທີ່ເສຍປຽບກວ່າໝູ່, ເນື່ອງຈາກເຂົາເຈົ້າຍັງບໍ່ທັນໄດ້ຮັບການເອົາໃຈໃສ່ເລື່ອງສິດທິ, ການເຂົ້າເຖິງຊັບພະຍາກອນ, ການມີສ່ວນຮ່ວມໃນການຕັດສິນບັນຫາ ແລະ ເສີມສ້າງຄວາມເປັນຜູ້ນໍາຂອງເຂົາເຈົ້າ ທາງດ້ານການເມືອງ ແລະ ເສດຖະກິດຢ່າງຈິງຈັງ ແລະ ເທົ່າທີ່ຄວນຈະມີ. ການປະຕິບັດຕາມບັນດາກົດໝາຍທີ່ກ່ຽວຂ້ອງກັບການຕ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຍັງບໍ່ທັນເຄັ່ງຄັດ; ແລະ ການເຂົ້າເຖິງຂໍ້ມູນ ແລະ ການບໍລິການກ່ຽວກັບສິດທິທາງດ້ານສຸຂະພາບທາງເພດ ແລະ ໄວຈະເລີນພັນຂອງໄວໜຸ່ມກໍ່ຍັງຈໍາກັດ.

ການເພີ່ມຄວາມສາມາດ ແລະ ບົດບາດຂອງແມ່ຍິງໃນຂົງເຂດການເມືອງ ຍັງເປັນສິ່ງທ້າທາຍຢູ່ທຸກຂັ້ນ; ໂດຍສະເພາະຢູ່ໃນເຂດຊົນນະບົດທີ່ມີແມ່ຍິງພຽງແຕ່ 2% ເທົ່ານັ້ນທີ່ໄດ້ເປັນນາຍບ້ານ. ການເພີ່ມຂີດຄວາມສາມາດຂອງແມ່ຍິງ ທາງດ້ານເສດຖະກິດແມ່ນຍັງມີໜ້ອຍ ເຖິງແມ່ນວ່າຈະມີແມ່ຍິງປະກອບສ່ວນຢູ່ໃນແຮງງານລວມໃນອັດຕາສ່ວນທີ່ສູງກໍ່ຕາມ. ແມ່ຍິງໜຸ່ມໂດຍສະເພາະເປັນຜູ້ທີ່ເສຍປຽບໃນເວລາທີ່ເຂົາເຈົ້າຍ້າຍເຂົ້າເມືອງ ຫລື ໄປເຮັດວຽກຢູ່ປະເທດເພື່ອນບ້ານ ບ່ອນທີ່ເຂົາເຈົ້າມີຄວາມສ່ຽງສູງໃນການຖືກເອົາປຽບທັງທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ຍັງໄດ້ເຮັດວຽກທີ່ໄດ້ຄ່າແຮງງານໜ້ອຍ ຫລື ບໍ່ໝັ້ນຄົງ.

## 5. ຄວາມບໍ່ພ້ອມຕໍ່ເຫດການສະເທືອນໃຈ

ປະຊາຊົນລາວສ່ວນໃຫຍ່ອາໄສຢູ່ຕາມເຂດທົ່ງພຽງທີ່ມັກມີນໍ້າຖ້ວມ, ພາຍຸໃຕ້ຝຸ່ນ ແລະ ໄພແຫ້ງແລ້ງ - ໄພພິບັດຕົ້ນຕໍສາມຢ່າງນີ້ໄດ້ ເຮັດໃຫ້ເກີດຄວາມເສຍຫາຍຕໍ່ໂຄງລ່າງພື້ນຖານ, ຊັບສິນເຮືອນຊານບ້ານຊ່ອງ ແລະ ຜົນຜະລິດກະສິກໍາແຕ່ລະປີເປັນຈໍານວນເງິນເຖິງ 30 ລ້ານໂດລາ ສະຫະລັດ. ບັນຫາລະເບີດທີ່ບໍ່ທັນແຕກຍັງພົບເຫັນໃນ 42 ຂອງ ທັງໝົດ 46 ເມືອງທີ່ທຸກຍາກທີ່ສຸດທົ່ວປະເທດ, ເປັນເຫດໃຫ້ຂາດແຄນສະບຽງອາຫານ ແລະ ຈໍາກັດການເຮັດກະສິກໍາ ແລະ ກໍ່ສ້າງໂຄງລ່າງພື້ນຖານ. ສປປ ລາວ ຍັງບໍ່ມີຄວາມພ້ອມຕໍ່ການຮັບມືກັບໄພພິບັດທີ່ເກີດຈາກການປ່ຽນແປງທາງດ້ານສະພາບອາກາດ ຍ້ອນເສດຖະກິດ-ສັງຄົມຍັງເອື່ອຍອີງໃສ່ຂະແໜງການທີ່ມີການຕອບສະໜອງໄວຕໍ່ສະພາບອາກາດເຊັ່ນ: ຂະແໜງກະສິກໍາ ແລະ ນໍ້າ, ພ້ອມກັນນັ້ນ, ຄວາມສາມາດໃນການປັບຕົວຍັງຕໍ່າ ເຊິ່ງເປັນຜົນມາຈາກຄວາມທຸກຍາກທີ່ແຜ່ກະຈ່າຍຢູ່ທົ່ວທຸກບ່ອນ ແລະ ຍັງຂາດວິຊາການທາງດ້ານເຕັກນິກ ແລະ ສະຖາບັນທີ່ຮັບຜິດຊອບກໍ່ຍັງອ່ອນນ້ອຍ. ເຖິງວ່າ ລັດຖະບານໄດ້ຈັດຕັ້ງໃຫ້ມີມາດຕະການທີ່ເປັນລະບົບເພື່ອແກ້ໄຂບັນຫາໄພພິບັດ, ຫຼາຍໆຄັ້ງກໍ່ຍັງມີບັນຫາຢູ່.

ສະນັ້ນ, ຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດຫຼາຍກວ່າໝູ່ແມ່ນ ປະຊາຊົນທີ່ທຸກຍາກ, ເຈົ້າຂອງທີ່ດິນຂະໜາດນ້ອຍ, ແລະ ຜູ້ທີ່ເຮັດອາຊີບແບບສັນຈອນ, ໂດຍສະເພາະຊົນເຜົ່າກຸ່ມນ້ອຍ. ເຂົາເຈົ້າຖືກກະທົບຫລາຍທີ່ສຸດຈາກ ໂຄງການລົງທຶນ ທາງເສດຖະກິດທີ່ເຮັດໃຫ້ມີການຍົກຍ້າຍຂອງປະຊາຊົນ, ຂຸດຄົ້ນຊັບພະຍາກອນຂອງຊຸມຊົນ ແລະ ທໍາລາຍສິ່ງແວດລ້ອມ. ນອກຈາກນີ້, ເຂົາເຈົ້າຍັງອາດໄດ້ຮັບຜົນກະທົບຈາກເຫດການ ແລະ ໄພພິບັດຕ່າງໆ ຈາກທັງພາກພື້ນ ແລະ ທົ່ວໂລກນໍາ.



# ແມ່ຍິງມີບົດບາດ ທາງດ້ານເສດຖະກິດ

Strategy booklet Lao 151127 extended j.indd 7 27/11/15 14:50

# ແກ້ໄຂສະພາບການຂອງຄວາມທຸກຍາກ ແລະ ຄວາມບໍ່ຍຸດຕິທໍາ - ທິດສະດີການປ່ຽນແປງຂອງອັອກສະຟາມ

ອັອກສະຟາມ ຈະແກ້ໄຂບັນຫາຄວາມທຸກຍາກ ແລະ ຄວາມບໍ່ຍຸດຕິທໍາ ໃນ ສປປ ລາວ ດ້ວຍວິທີໃດນັ້ນ ແມ່ນອີງໃສທິດສະດີຂອງການປ່ຽນແປງທີ່ມີອົງປະກອບດັ່ງລຸ່ມນີ້

### ການຮັບຮູ້ເຖິງສິດທິພື້ນຖານຂອງປະຊາຊົນ

ການຮັບຮູ້ເຖິງສິດທິພື້ນຖານຂອງປະຊາຊົນແມ່ນພື້ນຖານຂອງການປ່ຽນແປງສັງຄົມໃນທາງບວກ. ອັອກສະຟາມໃຫ້ສັນຍາວ່າຈະສ້າງຄວາມອາດສາມາດໃຫ້ປະຊາຊົນທີ່ທຸກຍາກ, ໂດຍສະເພາະແມ່ຍິງ, ເພື່ອຮຽກຮ້ອງ, ຍິນດີ ແລະ ປົກປ້ອງສິດທິພື້ນຖານຂອງເຂົາເຈົ້າ.

### ລັດທີ່ມີຄວາມຮັບຜິດຊອບ ແລະ ພົນລະເມືອງທີ່ມີຄວາມກະຕືລືລົ້ນ

ການພັດທະນາແບບຍືນຍົງ ແລະ ຄອບຄຸມທົ່ວເຖິງທຸກຄົນແມ່ນຄວາມຮັບຜິດຊອບໂດຍລວມຂອງລັດ - ທີ່ມີຄວາມເອົາໃຈໃສ່ຕໍ່ບັນຫາຂອງປະຊາຊົນ, ຮັບຜິດຊອບ ແລະ ໂປ່ງໃສ ແລະ ເຮັດວຽກຮ່ວມກັບພົນລະເມືອງທີ່ກະຕືລືລົ້ນ ເພື່ອເປັນຕົວແທນ ແລະ ກະບອກສຽງຂອງກຸ່ມຄົນທຸກຍາກ, ຄົນກຸ່ມນ້ອຍ ແລະ ອາດຖືກແບ່ງແຍກໃນສັງຄົມ. ສະນັ້ນ, ພົນລະເມືອງດັ່ງກ່າວທີ່ປະກອບເປັນອົງການຈັດຕັ້ງທາງສັງຄົມ ຄືຜູ້ທີ່ມີບົດບາດໃນການຮັບປະກັນໃຫ້ລັດຖະບານມີຄວາມຮັບຜິດຊອບ. ນີ້ໝາຍຄວາມວ່າ ມັນແມ່ນການປະຕິບັດງານຂອງບັນດາພົນລະເມືອງທີ່ມີຄວາມກະຕືລືລົ້ນ ທີ່ຮຽກຮ້ອງເຖິງການປົກຄອງແບບມີສ່ວນຮ່ວມຢ່າງແທ້ຈິງ.

### ການປ່ຽນແປງທາງໂຄງສ້າງ ແລະ ອົງປະກອບ ຫລາຍຢ່າງ

ຄວາມທຸກຍາກ ແລະ ຄວາມບໍ່ຍຸດຕິທໍາແມ່ນບັນຫາທີ່ມີອົງປະກອບຫລາຍຢ່າງ ແລະ ຊັບຊ້ອນ. ບັນຫາເຫລົ່ານີ້ຖືກຂັບເຄື່ອນໂດຍການປ່ຽນແປງທາງດ້ານເສດຖະກິດສັງຄົມ ແລະ ບັນຫາການເມືອງທີ່ເກີດຂຶ້ນຢູ່ໃນລະດັບຕ່າງໆທີ່ແຕກຕ່າງກັນ - ຈາກລະດັບຄົວເຮືອນ ແລະ ຊຸມຊົນ, ແຂວງ ແລະ ປະເທດ, ທາພາກພື້ນ ແລະ ທົ່ວໂລກ. ການປ່ຽນແປງຊີວິດຂອງຍິງຊາຍທີ່ທຸກຍາກ ຮຽກຮ້ອງໃຫ້ມີການປະຕິບັດງານ ທີ່ມີລັກສະນະເຊື່ອມສານ ແລະ ສອດຄ່ອງຢູ່ໃນທຸກລະດັບທີ່ກ່າວມາ.

### ປ່ຽນແປງການພົວພັນທາງອໍານາດ

ຄວາມບໍ່ເທົ່າທຽມກັນ ແລະ ບໍ່ເໝາະສົມໃນດ້ານການໃຊ້ອໍານາດ ເຮັດໃຫ້ສັງຄົມເກີດຄວາມບໍ່ຍຸດຕິທໍາ. ສະນັ້ນ, ວຽກຂອງອັອກສະຟາມທັງໝົດ ຈຶ່ງເລັງໃສ່ເພີ່ມອໍານາດໃຫ້ມີເງື່ອນໄຂຮັບໃຊ້ຜູ້ທີ່ທຸກຍາກ.

### ແມ່ຍິງເປັນສູນກາງ

ການວິເຄາະ, ຍຸດທະສາດ ແລະ ການປະຕິບັດງານຂອງພວກເຮົາ ແມ່ນລ້ວນແຕ່ໃຫ້ຄວາມສໍາຄັນກັບບັນຫາບົດບາດຍິງຊາຍ ແລະ ສິດທິຂອງແມ່ຍິງ. ອັນນີ້ຮຽກຮ້ອງໃຫ້ມີການວິເຄາະທີ່ຄໍານຶງເຖິງບົດບາດຍິງຊາຍ, ພາສາ ແລະ ການປະຕິບັດງານ ແລະ ຄວາມເຂົ້າໃຈຕໍ່ຜົນກະທົບທີ່ແຕກຕ່າງກັນ ຂອງບັນດາສາເຫດຂອງຄວາມທຸກຍາກ ແລະ ວຽກງານພັດທະນາຂອງແມ່ຍິງ.

### ຜົນປະໂຫຍດຂອງການຮຽນຮູ້ ແລະ ການເຮັດວຽກຮ່ວມກັນ

ການຮຽນຮູ້ ແລະ ຜົນປະໂຫຍດຂອງການເຮັດວຽກຮ່ວມກັນມີຄວາມຈໍາເປັນໃນການຊຸກຍູ້ໃຫ້ອັອກສະຟາມເຮັດວຽກແບບວ່ອງໄວ ແລະ ສາມາດປັບຕົວໄດ້ໃນສະຖານະການທີ່ບໍ່ແນ່ນອນ ແລະ ຄາດເດົາບໍ່ໄດ້. ການຮັບມືກັບການປ່ຽນແປງເຊິ່ງມີອົງປະກອບຫລາຍຢ່າງຮຽກຮ້ອງໃຫ້ມີການປະສົມປະສານຍຸດທະສາດຫລາຍໆຢ່າງ ແລະ ສ້າງເຄືອຂ່າຍທີ່ເຂັ້ມແຂງຂອງຜູ້ທີ່ມີສ່ວນຮ່ວມ ຢູ່ໃນລະດັບຕ່າງໆທີ່ເຮັດວຽກຮ່ວມກັນໄດ້ຢ່າງມີປະສິດທິຜົນ.

# ເປົ້າໝາຍ ແລະ ຈຸດປະສົງທາງດ້ານຍຸດທະສາດ 2015-2019

ໃນອີກຫ້າປີຕໍ່ໜ້າ, ອັອກສະຟາມຈະຊອກຫາວິທີທາງ ເພື່ອປະກອບສ່ວນເຂົ້າໃນການເຮັດໃຫ້ ມີການປ່ຽນແປງທີ່ແທ້ຈິງຕໍ່ຊີວິດຂອງຍິງຊາຍທີ່ທຸກຍາກໃນ ສປປ ລາວ ໂດຍຜ່ານການບັນລຸ ບັນດາເປົ້າໝາຍຍຸດທະສາດ ທີ່ມີການກ່ຽວຂ້ອງກັນດັ່ງຕໍ່ໄປນີ້, ໂດຍມີແມ່ຍິງເປັນສູນກາງຂອງ ວຽກງານຂອງພວກເຮົາ:




ພວກເຮົາຫວັງວ່າ ວຽກງານຂອງພວກເຮົາຕໍ່ກັບເປົ້າໝາຍການປ່ຽນແປງເຫຼົ່ານີ້ ຈະປະກອບສ່ວນເຂົ້າໃນການບັນລຸບັນດາເປົ້າໝາຍຍຸດທະສາດຂອງ ອັອກສະຟາມສາກົນ, ເຊິ່ງປະກອບມີ: ສິດທິໃນການຖືກຮັບຟັງ, ການສົ່ງເສີມຄວາມຍຸດຕິທຳຕໍ່ເພດຍິງຊາຍ, ຊ່ວຍຊີວິດໃນປະຈຸບັນ ແລະ ອານາຄົດ, ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການແບ່ງປັນຊັບພະຍາກອນຢ່າງຍຸດຕິທຳ.



## 1.ການມີສ່ວນຮ່ວມຢ່າງຫ້າວຫັນຂອງພົນລະເມືອງ ແລະ ການພັດທະນາການຈັດຕັ້ງທາງສັງຄົມ

**ເປົ້າໝາຍຍຸດທະສາດ:**

ຍິງຊາຍທີ່ທຸກຍາກ ແລະ ກຸ່ມຄົນທີ່ດ້ອຍໂອກາດ ມີຄວາມສາມາດໃນການຕັດສິນບັນຫາຕ່າງໆ ທີ່ມີຜົນກະທົບ ຕໍ່ຊີວິດຂອງພວກເຂົາ ໂດຍນໍາໃຊ້ສິດຂອງເຂົາເອງ ໃນການສະແດງຄໍາຄິດເຫັນ ແລະ ເຂົ້າເຖິງຂໍ້ມູນຂ່າວສານ, ປຶກສາຫາລື ແລະ ໄດ້ຮັບການຄຸ້ມຄອງຈາກກົດໝາຍ, ມີສ່ວນຮ່ວມໃນຂະບວນການ ພັດທະນາເສດຖະກິດສັງຄົມ ແລະ ນະໂຍບາຍຂອງລັດຖະບານ ທັງໃນລະດັບທ້ອງຖິ່ນ ແລະ ປະເທດ.

### ຈຸດປະສົງທາງຍຸດທະສາດ

1. ສະໜັບສະໜູນອົງການຈັດຕັ້ງທາງສັງຄົມ ທີ່ມີສ່ວນຮ່ວມທັງໝົດ ພ້ອມທັງຄວາມຮັບຜິດຊອບ ແລະ ຄວາມຫຼາກຫຼາຍ ທີ່ສາມາດປະຕິບັດສິດຂອງອົງກອນຕົວເອງໃນການຈັດຕັ້ງ, ການກະຕຸກຊຸກຍູ້, ການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມນໍາພາກລັດ ແລະ ການໄດ້ຮັບຄວາມຍຸດຕິທໍາ ທີ່ເທົ່າທຽມກັນໄດ້ດີກ່ວາ;

2. ເພີ່ມຂີດຄວາມສາມາດໃຫ້ແກ່ຊຸມຊົນ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ບັນດາອົງການ ທີ່ເປັນຕົວແທນປະຊາຊົນ ເພື່ອຮັບປະກັນໃຫ້ມີຄວາມໂປ່ງໃສ, ການປະຕິບັດງານຢ່າງຫ້າວຫັນ ແລະ ຕາມໜ້າທີ່ຮັບຜິດຊອບຂອງລັດ ຕໍ່ປະຊາຊົນທີ່ທຸກຍາກ, ການນັບຖືຕໍ່ສິດທິຂອງພົນລະເມືອງ ແລະ ການປະຕິບັດຕາມກົດໝາຍບ້ານເມືອງ;

3. ຮັບປະກັນໃຫ້ມີການຕອບສະໜອງ ແລະ ຮັບຜິດຊອບຈາກອໍານາດການປົກຄອງຂັ້ນທ້ອງຖິ່ນ ແລະ ສູນກາງ ແລະ ພາກສ່ວນເອກະຊົນໃຫ້ຫລາຍຂຶ້ນ ເພື່ອຜົນປະໂຫຍດຂອງຄົນທຸກຍາກ, ຜູ້ດ້ອຍໂອກາດ ແລະ ບັນດາອົງການຈັດຕັ້ງທີ່ເປັນຕົວແທນໃຫ້ເຂົາເຈົ້າ ແລະ ເພີ່ມຄວາມສາມາດໃນການເຈລະຈາ ໂນ້ມນ້າວ ແລະ ຮັບປະກັນສິດຜົນປະໂຫຍດຂອງເຂົາເຈົ້າຈາກການປະຕິບັດນະໂຍບາຍ ແລະ ນິຕິກໍາວ່າດ້ວຍການແບ່ງປັນຊັບພະຍາກອນ ແລະ ຈາກນະໂຍບາຍລົງທຶນ ແລະ ວິທີປະຕິບັດຂອງ ພາກສ່ວນເອກະຊົນ.



**ຍຸດທະສາດ ແລະ ວິທີການຕົ້ນຕໍ:**

ຊ່ວຍສ້າງຄວາມອາດສາມາດຂອງຊຸມຊົນ ແລະ ອົງການທີ່ຢູ່ຕາມທ້ອງຖິ່ນ ໃນການ ວິເຄາະບັນຫາ, ມີສ່ວນຮ່ວມໃນຂະບວນການຕັດສິນບັນຫາ ຢູ່ໃນລະດັບທ້ອງຖິ່ນຕໍ່ກັບບັນຫາທີ່ມີຜົນກະທົບຕໍ່ການດໍາລົງຊີວິດຂອງເຂົາເຈົ້າ ແລະ ສິ່ງຜົນກະທົບຕໍ່ ນະໂຍບາຍພັດທະນາເສດຖະກິດ ແລະ ການລົງທຶນ.

ສະໜັບສະໜູນອົງການຈັດຕັ້ງທາງສັງຄົມ ເພື່ອສ້າງຄວາມອາດສາມາດຂອງເຂົາເຈົ້າ ໃນການມີສ່ວນຮ່ວມ ແລະ ການສະໜັບສະໜູນກະຕຸກຊຸກຍູ້ ຕໍ່ພາກສ່ວນລັດຖະບານ ແລະ ບັນດາຂະແໜງການເອກະຊົນ ໃນການພິຈະລະນາຄໍາສະເໜີຕ່າງໆຂອງຊຸມຊົນ ສະໜັບສະໜູນການເຂົ້າຮ່ວມຂອງອົງການຈັດຕັ້ງທາງສັງຄົມໃນເວທີເຈລະຈາຢູ່ລະດັບພາກພື້ນ ແລະ ສາກົນ, ໂດຍສະເພາະແມ່ນບັນຫາທີ່ຕິດພັນກັບການເຂົ້າຮ່ວມ ປະຊາຄົມເສດຖະກິດອາຊຽນເປັນບຸລິມະສິດ

ປະກອບສ່ວນໃສ່ໃນການເສີມສ້າງຄວາມອາດສາມາດຂອງລັດຖະບານ ແລະ ສະພາແຫ່ງຊາດ ໃນການສົ່ງເສີມຂະບວນການສ້າງນະໂຍບາຍແບບມີສ່ວນຮ່ວມ ເຊິ່ງຮັບປະກັນໃຫ້ຊຸມຊົນ ທີ່ຢູ່ໃນເຂດຊົນນະບົດທີ່ທຸກຍາກ, ໂດຍສະເພາະແມ່ນ ບັນດາຊົນເຜົ່າ ແລະ ແມ່ຍິງ ໄດ້ມີສ່ວນຮ່ວມໃນການກະຕຸກຊຸກຍູ້ເຂົ້າໃນຂະບວນ ການວາງແຜນ

ສະໜັບສະໜູນຄວາມຕັ້ງໃຈ ເພື່ອໃຫ້ເກີດການປ່ຽນແປງ ຕໍ່ຂອບເຂດວຽກນະໂຍ ບາຍ ແລະ ນິຕິກໍາຕ່າງໆ ທີ່ກ່ຽວກັບວຽກງານຂອງສະພາປະຊາຊົນ ແລະ ການປະຕິບັດ ທີ່ເປັນທໍາຂອງດໍາລັດວ່າດ້ວຍສະມາຄົມທີ່ບໍ່ຫວັງຜົນກາໄລ ແລະ ນິຕິກໍາອື່ນໆ ທີ່ກ່ຽວ ຂ້ອງໃນລະດັບສູນກາງ, ແຂວງ ແລະ ເມືອງ.



## 2. ຄວາມຍຸດຕິທຳຕໍ່ເພດຍິງຊາຍ

**ເປົ້າໝາຍຍຸດທະສາດ:**

ແມ່ຍິງ ແລະ ໄວໜຸ່ມໄດ້ມີໂອກາດໃນການຈັດກອງປະຊຸມ ແລະ ສົນທະນາກ່ຽວກັບຄວາມຕ້ອງການສະເພາະຂອງເຂົາເຈົ້າ ແລະ ກ້າປະເຊີນໜ້າກັບບັນຫາ ການແບ່ງ ແຍກ ແລະ ການບໍ່ໃຫ້ສິດອຳນາດ ແລະ ມີຊີວິດທີ່ປາສະຈາກຄວາມຮຸນແຮງ.

**ຈຸດປະສົງທາງຍຸດທະສາດ:**

1. ແມ່ຍິງທີ່ທຸກຍາກ ເຂົ້າເຖິງການສິດເປັນເຈົ້າຂອງ, ບໍລິຫານ ແລະ ຄຸ້ມຄອງຊັບພະຍາກອນການຜະລິດຫລາຍຂຶ້ນ ແລະ ຍືນຍົງກວ່າເກົ່າ;

2. ແມ່ຍິງທີ່ທຸກຍາກ ມີໂອກາດລະດົມຄວາມຄິດ ແລະ ສົນທະນາກ່ຽວກັບຄວາມຕ້ອງການສະເພາະຂອງເຂົາເຈົ້າ ແລະ ສາມາດແກ້ໄຂບັນຫາການແບ່ງແຍກ, ການຖືກກົດສິດອຳນາດ ແລະ ມີຊີວິດທີ່ປາສະຈາກຄວາມຮຸນແຮງ;

3. ໄວໜຸ່ມ, ໂດຍສະເພາະແມ່ຍິງໄວໜຸ່ມທີ່ທຸກຍາກ ແລະ ເປັນຄົນກຸ່ມນ້ອຍ, ມີຄວາມສາມາດ ໃນການອອກສິດອອກສຽງ ເພື່ອສິດທິຂອງເຂົາເຈົ້າ.



**ຍຸດທະສາດ ແລະ ວິທີການຕົ້ນຕໍ:**

ເພີ້ມຂີດຄວາມສາມາດດ້ານເສດຖະກິດຂອງແມ່ຍິງ ແລະ ການດໍາລົງຊີວິດທີ່ ສະເໝີພາບທາງດ້ານຍິງຊາຍ ໂດຍການຮັບປະກັນໃຫ້ທັງຍິງ ແລະ ຊາຍ ໃຫ້ເຂົ້າຮ່ວມ ໃນຂະບວນການ ແລະ ເວທີຕັດສິນບັນຫາດ້ານເສດຖະກິດທີ່ເປັນທາງການບົນພື້ນ ຖານຄວາມເທົ່າທຽມກັນ ແລະ ປະເຊີນໜ້າ ແລະ ຫັນປ່ຽນໂຄງສ້າງອໍານາດທາງເສດຖະກິດທີ່ມີຢູ່ໃນປະຈຸບັນຢູ່ຂັ້ນບ້ານ ດ້ວຍການເຮັດວຽກຮ່ວມກັບອໍານາດການປົກຄອງ ຂັ້ນເມືອງ/ແຂວງຢ່າງຈິງຈັງ ແລະ ພາກສ່ວນບໍລິສັດທີ່ກ່ຽວຂ້ອງ.

ໃຫ້ໜ່ວຍງານຂອງແມ່ຍິງ ໄດ້ເຂົ້າຮ່ວມໃນວຽກງານການເມືອງຫລາຍຂຶ້ນ ໂດຍ ຜ່ານການສ້າງຄວາມອາດສາມາດ ແລະ ສົ່ງເສີມບົດບາດຍິງຊາຍ ແລະ ສິນທິສັນຍາວ່າ ດ້ວຍການລົບລ້າງການແບ່ງແຍກ ແມ່ຍິງທຸກຮູບແບບ, ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເວທີກົດໝາຍແກ້ໄຂບັນຫາຄວາມຮຸນແຮງທີ່ເກີດຈາກບົດບາດຍິງຊາຍ ແລະ ປົກປ້ອງແຮງງານຍິງ ແລະ ສິດທິທາງດ້ານສຸຂະພາບໄວຈະເລີນພັນ.

ເຊື່ອມສານບົດບາດຍິງຊາຍຢູ່ໃນສະຖາບັນ ແລະ ໃນຂະບວນການ ແລະ ການແຊກແຊງການພັດທະນາ ແລະ ເຮັດໃຫ້ສະຖາບັນມີຄວາມຮັບຜິດຊອບ ໃນໜ້າທີ່ຂອງຕົນ ໂດຍສະເພາະສະຖາບັນທີ່ຮັບຜິດຊອບໃນການກະຈ່າຍ ແລະ ຮັບປະກັນຄວາມຍຸດຕິທໍາ, ປົກປ້ອງປະຊາຊົນ ພ້ອມທັງຮັບປະກັນ ແລະ ປົກປ້ອງ ສິດຂອງພົນລະເມືອງ.



## 3. ຊຸມຊົນທີ່ມີຄວາມສາມາດຟື້ນຕົວໄດ້

**ເປົ້າໝາຍຍຸດທະສາດ:**
ໃຫ້ປະຊາຊົນທີ່ທຸກຍາກ, ໂດຍສະເພາະແມ່ຍິງ, ຜູ້ທີ່ອາໄສຢູ່ໃນເຂດທີ່ມັກເກີດມີໄພພິບັດ ມີຄວາມອາດສາມາດຮັບມືກັບ ເຫດການກະທັນຫັນ, ຄວາມ ຕຶງຄຽດ ແລະ ຄວາມບໍ່ແນ່ນອນ ຕ່າງໆ ແລະ ຍັງສາມາດຜ່ານຜ່າເຫດການຄວາມຫຍຸ້ງຍາກຕ່າງໆ ທີ່ຂວາງໜ້າໄປໄດ້ຕາມ.

**ຈຸດປະສົງທາງຍຸດທະສາດ:**

1. ຈັດຕັ້ງປະຕິບັດກັບຄູ່ຮ່ວມງານໃນການຕອບສະໜອງທາງດ້ານມະນຸດສະທຳທີ່ມີຄຸນນະພາບສູງ ແລະ ທັນເວລາ ແລະ ຖືກກັບຄວາມຕ້ອງການຂອງປະຊາຊົນທີ່ຖືກກະທົບໂດຍໄພພິບັດ (ໂດຍສະເພາະແມ່ຍິງ) ໃນຂະນະດຽວກັນກໍ່ສ້າງຄວາມພ້ອມກັບເຫດການ ແລະ ສິ່ງທີ່ບໍ່ຄາດຝັນທີ່ອາດເກີດຂຶ້ນໃນອະນາຄົດຂອງເຂົາເຈົ້າ;

2. ສະໜັບສະໜູນຍິງຊາຍຜູ້ທີ່ທຸກຍາກໃນຊຸມຊົນທັງຊົນນະບົດແລະຕົວເມືອງໃນການສ້າງຄວາມອາດສາມາດໃນການປັບຕົວ ແລະ ຟື້ນຕົວໄດ້ຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ, ໄພພິບັດທີ່ເກີດຈາກທຳມະຊາດ ແລະ ໄພຈາກເງື້ອມມືຂອງມະນຸດ.

3. ເພື່ອສະໜັບສະໜູນຜັກດັນລັດຖະບານລາວ, ລັດຖະບານທ້ອງຖິ່ນ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນເອກະຊົນ ໂດຍການນຳໃຊ້ຍຸດທະສາດໃນການຮັບມືກັບໄພພິບັດໃຫ້ຫຼາຍຂຶ້ນ ເຊິ່ງແກ້ໄຂຈາກສາເຫດ ຕົ້ນຕໍຂອງການອ່ອນແອ ແລະ ສ້າງຄວາມສາມາດໃຫ້ແກ່ປະຊາຊົນທີ່ທຸກຍາກ ສາມາດຟື້ນຕົວກັບຄືນສູ່ສະພາບເດີມໄດ້.




**ຍຸດທະສາດ ແລະ ວິທີການຕົ້ນຕໍ:**

ຮັບປະກັນການຕອບສະໜອງ ແລະ ຊ່ວຍເຫລືອດ້ານມະນຸດສະທຳທີ່ມີຄຸນນະພາບສູງ ໂດຍການສ້າງຄວາມອາດສາມາດຂອງຄູ່ຮ່ວມງານ, ອຳນາດການປົກຄອງທ້ອງຖິ່ນ ແລະ ຜູ້ປະຕິບັດງານອື່ນໆ ເພື່ອປະຕິບັດການຮັບມືຕໍ່ເຫດການສຸກເສີນ ໃນລັກສະນະທີ່ມີການປະສານງານຄັກແນ່, ທີ່ສອດຄ່ອງກັບມາດຕະຖານ SPERE, ໂດຍເນັ້ນໜັກໃສ່ການສົ່ງເສີມການມີສ່ວນຮ່ວມ ແລະ ຄວາມເປັນຜູ້ນຳຂອງແມ່ຍິງ.

ສະໜັບສະໜູນການພັດທະນາຊຸມຊົນໃຫ້ມີຄວາມສາມາດຟື້ນຕົວໄດ້ ໂດຍການວາງ ແຜນການຫລຸດຜ່ອນຄວາມສ່ຽງຂອງໄພພິບັດທີ່ເໝາະສົມ ແລະ ວິທີການຮ່ວມມືທີ່ ເຊື່ອມຕໍ່ກັບແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານ (SEDP).

ສົ່ງເສີມຜັກດັນຄວາມຕັ້ງໃຈໃນການກ້າວໄປສູ່ການຮຽນຮູ້ ແລະ ການເຮັດ ວຽກຮ່ວມກັນໃຫ້ມີຜົນດີຂຶ້ນຢ່າງມີປະສິດທິພາບສູງກ່ວາເກົ່າ ແລະ ການແລກ ປ່ຽນຄວາມຮູ້ຢ່າງມີປະສິດທິພາບ ໃນທົ່ວລະບົບຂອງອົງການສະຫະປະຊາຊາດ, ກຸ່ມ ວິຊາການຄຸ້ມຄອງໄພພິບັດ, ພາກສ່ວນເອກະຊົນ ແລະ ເຄືອຂ່າຍລັດຖະບານ ເພື່ອໃຫ້ມີການແບ່ງປັນຂໍ້ມູນຂ່າວສານ ແລະ ຊັບພະຍາກອນ, ການສ້າງແຜນວຽກ ແລະ ການ ຕອບສະໜອງດ້ານມະນຸດສະທຳທີ່ດີກວ່າເກົ່າ.



## 4. ການພັດທະນາແບບຍືນຍົງ ແລະ ການລົງທຶນທີ່ມີຄວາມຮັບ ຜິດຊອບ

**ເປົ້າໝາຍຍຸດທະສາດ:**

ໃຫ້ຍິງຊາຍຜູ້ທຸກຍາກບັນດາເຜົ່າ ໄດ້ຮັບຜົນປະໂຫຍດຈາກຍຸດທະສາດການພັດທະນາ ທີ່ມີ ລັກສະນະ ຍືນຍົງ,ທົ່ວເຖິງ ທຸກຄົນ ແລະ ຈາກການລົງທຶນ ທີ່ໄດ້ຄຸນນະພາບ ແລະ ມີ ຄວາມຮັບຜິດຊອບເຂົ້າໃນ ຂະແໜງທຸລະກິດກະສິກໍາ, ຊັບພະຍາກອນທໍາມະຊາດ ແລະ ຂະແໜ່ງການອື່ນໆ ທີ່ກ່ຽວຂ້ອງ ໂດຍສະເພາະໃນ ເຂດຊົນນະບົດ ໃນ ສປປ ລາວ.

**ຈຸດປະສົງທາງຍຸດທະສາດ:**

1. ຍິງຊາຍບັນດາເຜົ່າສາມາດປະກອບສ່ວນ ແລະ ປົກປ້ອງສິດທິຂອງເຂົາເຈົ້າ ໂດຍສະເພາະຕໍ່ກັບ ການນໍາໃຊ້ທີ່ດິນ, ນໍ້າ ແລະ ຊັບພະຍາກອນອື່ນໆ ໄດ້ຫລາຍຂຶ້ນ, ປະຊາຊົນມີຄວາມອາດສາມາດ ແລະ ອໍານາດຫລາຍຂຶ້ນ ໃນການກວດກາ ແລະ ຮັບປະກັນວ່າ ບັນດາໂຄງການລົງທຶນມີຄວາມໂປ່ງໃສ, ຮັບຜິດຊອບ ແລະ ສ້າງຜົນປະໂຫຍດໃຫ້ແກ່ຄົນທຸກຍາກ ເພື່ອໃຫ້ເຂົາເຈົ້າມີການດໍາລົງຊີວິດແບບຍືນຍົງ ແລະ ມີສະຫວັດດີພາບທີ່ດີ;

2. ລັດຖະບານລາວ, ຈາກສູນກາງຫາທ້ອງຖິ່ນ, ຈະສ້າງສະພາບແວດລ້ອມທີ່ເອື້ອອໍານວຍສໍາລັບການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ຍືນຍົງ, ເຊິ່ງລວມເຖິງການມີລະບຽບການຄຸ້ມຄອງທີ່ສອດຄ່ອງ ແລະ ຄວບຄຸມກວ້າງຂວາງ ແລະ ມີການຄຸ້ມຄອງທີ່ມີປະສິດທິພາບ, ເພື່ອຮັບປະກັນວ່າ ພາກສ່ວນບໍລິສັດຈະມີຄວາມຮັບຜິດຊອບ ແລະ ປະຕິບັດຕາມ ໂຄງຮ່າງທາງກົດໝາຍ ແລະ ມາດຕະຖານຕ່າງໆ;

3. ການລົງທຶນຂອງເອກະຊົນຕໍ່ທຸລະກິດກະສິກໍາ ແລະ ຂະແໜ່ງຊັບພະຍາກອນທໍາມະຊາດອື່ນໆຈະນໍາໃຊ້ ແລະ ຈັດຕັ້ງປະຕິບັດຕາມກົດຈັນຍາບັນ ແລະ ບັນຫາເງື່ອນໄຂຕ່າງໆຕາມມາດຕະຖານສາກົນ, ເຄົາລົບກົດໝາຍ, ແລະ ສ້າງຄວາມຮັບຜິດຊອບຕໍ່ສັງຄົມ, ຮັບປະກັນການລົງທຶນທີ່ມີຄວາມຮັບຜິດຊອບ, ແລະ ເຄົາລົບສິດທິມະນຸດ ແລະ ອື່ນໆ;



4. ຄົ້ນຄ້ວາຮູບແບບວິທີການພັດທະນາແບບຍືນຍົງ ແລະ ສະເໜີພາບໂດຍໃຫ້ ຊາວນາສາມາດຄຸ້ມຄອງ ຈັດການບໍລິຫານ ຊັບພະຍາກອນການຜະລິດຂອງເຂົາເຈົ້າເອງ ພ້ອມທັງມີການປັບປຸງ ການເຂົ້າເຖິງຕະຫລາດ ແລະ ບັນດາກິດຈະກຳນີ້ ໄດ້ຮັບການຊຸກຍູ້ ແລະ ສະໜັບສະໜູນ ໂດຍອົງການທີ່ເປັນຕົວແທນ ແລະ ບັນດາ ອົງການຈັດຕັ້ງທາງສັງຄົມ.

**ຍຸດທະສາດ ແລະ ວິທີການຕົ້ນຕໍ:**

ສົ່ງເສີມການເຂົ້າຮ່ວມຂອງອົງການຈັດຕັ້ງທາງສັງຄົມ ແລະ ຊຸມຊົນ ໃນການ ຕັດສິນບັນຫາ, ໂດຍສະເພາະ ສ້າງຕັ້ງອົງການຈັດຕັ້ງທີ່ເປັນຕົວແທນ, ຄົ້ນຄວ້າຊອກຫາ ແລະ ທົດລອງ ຮູບແບບການພັດທະນາແບບຍືນຍົງທີ່ສາມາດໃຊ້ເປັນພື້ນຖານແກ່ການສະໜັບສະໜູນວິທີການສົ່ງເສີມ ແລະ ນະໂຍບາຍຂອງລັດ ແລະ ສົ່ງເສີມໃຫ້ມີເວທີສົນທະນາປຶກສາຫາລືຂອງຜູ້ມີສ່ວນຮ່ວມຫລາຍຝ່າຍ ກ່ຽວກັບວິທີທາງເລືອກຂອງ ການພັດທະນາ

ສ້າງຄວາມເຂົ້າໃຈໃຫ້ແກ່ຄູ່ຮ່ວມງານ ແລະ ປະຊາຊົນທົ່ວໄປກ່ຽວກັບຮູບແບບ ການພັດທະນາແບບຍືນຍົງ ເພື່ອໃຫ້ມີການແລກປ່ຽນຄຳຄິດເຫັນກ່ຽວກັບທາງເລືອກທີ່ ເໝາະສົມ ແລະ ຮູບແບບໃໝ່ ຂອງການພັດທະນາ

ປຶກສາຫາລື ກັບລັດຖະບານ ເພື່ອສ້າງໃຫ້ມີການຮັບປະກັນໂຄງຮ່າງກົດລະບຽບ ແລະ ນະໂຍບາຍທີ່ເນັ້ນສະໜັບສະໜູນຄົນທຸກຍາກ ແລະ ມີສະພາບແວດລ້ອມ ແລະ ນະໂຍບາຍ ສຳລັບການລົງທຶນແບບຍືນຍົງ ໂດຍອີງໃສ່ການວິເຄາະບັນຫາຢ່າງມີຫລັກຖານຄັກແນ່ ແລະ ການສ້າງແນວຄວາມຄິດກ່ຽວກັບ ການພັດທະນາແບບໃໝ່

## ແນວທາງການເຮັດວຽກຂອງອັອກສະຟາມ

ບົດບາດອັນເປັນພື້ນຖານຂອງອັອກສະຟາມ ການເປັນຕົວກະຕຸກຊຸກຍູ້ເຊັ່ນ: ໂນ້ມນ້າວ, ອໍານວຍຄວາມສະດວກ, ເປັນຂໍ້ຕໍ່, ເປັນຕົວແທນຕາງໜ້າ, ສື່ສານ ແລະ ສ້າງພື້ນທີ່ສໍາລັບການສົນທະນາປຶກສາຫາລື, ເຮັດວຽກຮ່ວມກັນ ແລະ ເຈລະຈາ ລະຫວ່າງຫລາຍພາກສ່ວນທີ່ແຕກຕ່າງກັນ ເພີ່ມຂີດຄວາມສາມາດ ແລະ ສະໜັບສະໜູນການເຮັດວຽກ ຂອງຜູ້ທີ່ສາມາດຊຸກຍູ້ໃຫ້ມີການປ່ຽນແປງ.

ວຽກງານຂອງອັອສະຟາມຈະດໍາເນີນໄປຕາມວິທີການໂດຍລວມ ດັ່ງລຸ່ມນີ້:

ເຮັດວຽກກັບຄູ່ຮ່ວມງານທ້ອງຖິ່ນ ໃນນາມເປັນຜູ້ຊຸກຍູ້ການປ່ຽນແປງ ໂດຍສ້າງຄວາມອາດສາມາດ ແລະ ເອື້ອອໍານວຍ, ໂດຍທີ່ບໍ່ແມ່ນການຍາດວຽກ ຫຼື ຍຶດຄອງພື້ນທີ່ຂອງເຂົາເຈົ້າ.

ມີສ່ວນຮ່ວມໃນການສະໜັບສະໜູນການປ່ຽນແປງທາງດ້ານນະໂຍບາຍ ລວມທັງການຈັດຕັ້ງປະຕິບັດ, ຮັບປະກັນໃຫ້ເຊື່ອມຕໍ່ວຽກງານຕ່າງໆຢູ່ໃນຂັ້ນຊຸມຊົນ-ທ້ອງຖິ່ນ-ປະເທດ.

ເຊື່ອມໂຍງວິທີການເຮັດແຜນງານດຽວ ທີ່ເຊື່ອມຕໍ່ວຽກງານຂອງທຸກໆ ເປົ້າໝາຍການປ່ຽນແປງເຂົ້ານໍາກັນ; ໝາກຫົວໃຈຂອງ ວິທີການແຜນງານດຽວ ແມ່ນການເລືອກແມ່ຍິງເປັນສູນກາງ.

ສ້າງແຫລ່ງຄວາມຮູ້ ແລະ ຮັບຜິດຊອບ ໂດຍຜ່ານການພັດທະນາຄວາມຮູ້, ແບ່ງປັນຂໍ້ມູນ, ແລະ ປະກອບສ່ວນເຂົ້າໃນເວທີສົນທະນາ.

ເປັນເຈົ້າການ ແລະ ນໍາໃຊ້ຊັບພະຍາກອນທີ່ມີຈໍາກັດ ຢ່າງມີປະສິດທິຜົນ.

ອັອກສະຟາມປະຈໍາ ສປປ ລາວ ຈະເຮັດວຽກເພື່ອກາຍເປັນ ອັອກສະຟາມດຽວໃນປະເທດ. ເຊິ່ງໃນນີ້ຈະໄດ້ລວມເອົາ ການປ່ຽນແປງທາງດ້ານວິທີການສ້າງແຜນ, ໂຄງຮ່າງຈັດຕັ້ງ, ແລະ ການຮຽນຮູ້ ແລະ ກໍານົດຂອບຄວາມຮັບຜິດຊອບ ເພື່ອໃຫ້ລວມສູນລະບົບ ແລະ ມີຄວາມຕໍ່ເນື່ອງໃນການບໍລິຫານ ຫລາຍກວ່າເກົ່າ.

## ການຮ່ວມມື

ອັອກສະຟາມຈະສືບຕໍ່ເຮັດວຽກກັບຄູ່ຮ່ວມງານໃນປະຈຸບັນ ແລະ ທີ່ມີວິໄສທັດ ທີ່ກ່ຽວຂ້ອງກັບຈຸດປະສົງທາງຍຸດທະສາດຂອງອົງກອນ: ພ້ອມກັນນັ້ນ, ອັອກສະຟາມ ຈະຄົ້ນຄ້ວາຂໍ້ມູນກ່ຽວກັບບັນດາຄູ່ຮ່ວມງານທາງຍຸດທະສາດໃໝ່ ເຊັ່ນ: ພາກສ່ວນບໍລິສັດເອກະຊົນ, ສະຖາບັນຄົ້ນຄ້ວາ ແລະ ສຶກສາ, ສະພາແຫ່ງຊາດ, ແລະ ກໍາມະບານ.

ພວກເຮົາຈະສືບຕໍ່ຮ່ວມມືໜ່ວຍງານຂອງພາກລັດ ແລະ ອົງການຈັດຕັ້ງທາງສັງຄົມ, ຢູ່ຂັ້ນຕ່າງໆ ແລະ ທີ່ເໝາະສົມກັບເປົ້າໝາຍ ຍຸດທະສາດບໍ່ວ່າຈະແມ່ນໃນລະດັບຊຸມຊົນ, ແຂວງ, ປະເທດ, ຫລື ແມ້ແຕ່ພາກພື້ນ. ອັອກສະຟາມ ຈະທົດລອງເຮັດວຽກກັບເຄືອຂ່າຍຊາວນາໃໝ່ຢູ່ໃນລະດັບແຂວງ ໂດຍສຸມໃສ່ບັນຫາເລື້ອງຕ່ອງໂສ້ມູນຄ່າ ແລະ ການຄໍ້າປະກັນທາງດ້ານສະບຽງອາຫານ ເພື່ອໃຫ້ສາມາດເຊື່ອມສານເຂົ້າໃນນະໂຍບາຍຂອງລັດ ແລະ ສາມາດເຂົ້າຮ່ວມໂອ້ລົມກັນ ພາກສ່ວນບໍລິສັດ ແລະ ໜ່ວຍງານລັດຖະບານ ທີ່ກ່ຽວຂ້ອງ.

# ເຮັດວຽກກັບ ຄູ່ຮ່ວມງານທ້ອງຖິ່ນ ໃນນາມເປັນຜູ້ຊຸກຍູ້ ການປ່ຽນແປງ



# ພວກເຮົາເຮັດໄດ້

OXFAM

ຫ້ອງການພາຍໃນປະເທດ ສປປ ລາວ

ຕູ້ ປນ 4723

ນະຄອນຫລວງວຽງຈັນ

ສປປ ລາວ

ໂທລະສັບ: +856 (21) 264 224

ແຟັກ: +856 (21) 264 225

www.oxfam.org/en/countries/laos